ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອຸດົມໄຊ
ເລກທີ 1281/ອຊ
ອຸດົມໄຊ, ວັນທີ 12-7-2024

# ຂໍ້ຕົກລົງ
# ວ່າດ້ວຍການກຳນົດເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ຢູ່ແຂວງອຸດົມໄຊ

- ອີງຕາມ ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍ ວ່າດ້ວຍການສ້າງນິຕິກຳ ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ ສະບັບເລກທີ 23/ສພຊ, ລົງວັນທີ 11 ພຶດສະພາ 2017;
- ອີງຕາມ ດຳລັດ ວ່າດ້ວຍທີ່ດິນບໍລິເວນນ້ຳ ສະບັບເລກທີ 350/ລບ, ລົງວັນທີ 13 ພະຈິກ 2023;
- ອີງຕາມ ມະຕິຂອງກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາປະຊາຊົນແຂວງ ຊຸດທີ II ສະບັບເລກທີ ....../ ສພຂ.ອຊ, ລົງວັນທີ..................

**ເຈົ້າແຂວງ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການກຳນົດເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ຢູ່ແຂວງອຸດົມໄຊ, ພ້ອມທັງຄຸ້ມຄອງ, ຕິດຕາມກວດກາວຽກງານດັ່ງກ່າວໃຫ້ມີປະສິດທິຜົນ, ລວມສູນເປັນເອກະພາບ ໃນຂອບເຂດທົ່ວແຂວງ ແນ່ໃສ່ປົກປັກຮັກສາຄຸນນະພາບ ແລະ ປະລິມານນ້ຳ ເພື່ອບໍລິໂພກ, ອຸປະໂພກ, ປ້ອງກັນໄພນ້ຳຖ້ວມ, ໄພແຫ້ງແລ້ງ, ອະນຸລັກພັນພືດ, ສັດນ້ຳ, ລະບົບນິເວດ, ຄຸນຄ່າທາງດ້ານທຳມະຊາດ, ປະຫວັດສາດ, ວັດທະນະທຳ, ການທ່ອງທ່ຽວ, ການສຶກສາ ແລະ ການຄົ້ນຄວ້າທົດລອງວິທະຍາສາດ; ຕອບສະໜອງຄວາມຕ້ອງການໃນການດຳລົງຊີວິດ, ການຜະລິດກະສິກຳ, ອຸດສາຫະກຳ ແລະ ການບໍລິການ, ຮັບປະກັນ ເຮັດໃຫ້ເກີດຜົນປະໂຫຍດສູງສຸດ ຕໍ່ການພັດທະນາເສດຖະກິດ-ສັງຄົມ ຕາມທິດສີຂຽວ ແລະ ຍືນຍົງ.

### ມາດຕາ 2 ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ

ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ແມ່ນພື້ນທີ່ສະຫງວນໄວ້ ເພື່ອປົກປັກຮັກສາຄຸນນະພາບ ແລະ ປະລິມານຂອງນ້ຳ ສຳລັບການບໍລິໂພກ, ອຸປະໂພກ, ປ້ອງກັນໄພນ້ຳຖ້ວມ, ໄພແຫ້ງແລ້ງ, ອະນຸລັກພັນພືດ ສັດນ້ຳ, ລະບົບນິເວດ, ຄຸນຄ່າທາງດ້ານທຳມະຊາດ, ປະຫວັດສາດ, ວັດທະນະທຳ, ການທ່ອງທ່ຽວ, ການສຶກສາ, ການຄົ້ນຄວ້າ ແລະ ທົດລອງວິທະຍາສາດ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ເຂດສະຫງວນ** ໝາຍເຖິງພື້ນທີ່ ທີ່ໄດ້ກຳນົດ ເພື່ອຈຸດປະສົງນຳໃຊ້ໃນການອະນຸລັກທຳມະຊາດ

ປົກປັກຮັກສາພັນພືດ, ພັນສັດ, ລະບົບນິເວດ ແລະ ສິ່ງທີ່ມີຄຸນຄ່າທາງດ້ານທຳມະຊາດ, ປະຫວັດສາດ, ວັດທະນະທຳ, ການທ່ອງທ່ຽວ, ສິ່ງແວດລ້ອມ, ການສຶກສາ ແລະ ການທົດລອງທາງວິທະຍາສາດ;

2. **ນໍ້າ** ໝາຍເຖິງ ຊັບພະຍາກອນທຳມະຊາດຊະນິດໜຶ່ງ ທີ່ເປັນທາດແຫຼວ ເຊິ່ງແມ່ນຊັບພະຍາກອນຕົ້ນຕໍ ແລະ ເປັນພື້ນຖານກວ່າໝູ່ ໃນຊັບພະຍາກອນນໍ້າ;

3. **ຊັບພະຍາກອນນໍ້າ** ໝາຍເຖິງຊັບພະຍາກອນທຳມະຊາດ ເຊິ່ງປະກອບດ້ວຍນໍ້າ, ແຫຼ່ງນໍ້າ ແລະ ສິ່ງທີ່ມີຊີວິດ ຫຼື ບໍ່ມີຊີວິດ ຢູ່ໃນແຫຼ່ງນໍ້າ ເຊັ່ນ: ພືດ, ສັດນໍ້າ, ຫີນ, ຫີນແຮ່, ຊາຍ, ດິນ, ແຮ່ທາດ;

4. **ເຂດບໍລິເວນຍອດນໍ້າ** ໝາຍເຖິງ ເນື້ອທີ່ປ່າໄມ້ ແລະ ທີ່ດິນປ່າໄມ້ ເຊິ່ງເປັນຕົ້ນກຳເນີດຂອງສາຍນໍ້າ ເຊິ່ງກວມເອົາເນື້ອທີ່ອ່າງຮັບນໍ້າ;

5. **ແຫຼ່ງນໍ້າ** ໝາຍເຖິງສະຖານທີ່ບ່ອນເຕົ້າໂຮມ, ອາໄສ, ພັກຕົວ ຫຼື ເຄື່ອນໄຫວແບບຖາວອນ ຫຼື ຊົ່ວຄາວຂອງນໍ້າ; ແຫຼ່ງນໍ້າ ເກີດຈາກທຳມະຊາດ ຫຼື ມະນຸດສ້າງຂຶ້ນ ເຊິ່ງມີຢູ່ເທິງດິນ, ໃຕ້ດິນ ແລະ ໃນອາກາດ;

6. **ລະບົບນິເວດ** ໝາຍເຖິງ ສາຍພົວພັນລະຫວ່າງ ສິ່ງມີຊີວິດ ແລະ ບໍ່ມີຊີວິດ ທີ່ຄົງຕົວຢູ່ຕາມທຳມະຊາດ;

7. **ຊີວະນາງພັນ** ໝາຍເຖິງ ຄວາມຫຼາກຫຼາຍຂອງລະບົບນິເວດຊະນິດ ແລະ ແນວພັນຂອງສິ່ງມີຊີວິດ ເຊັ່ນ: ພືດ, ສັດ, ແມງໄມ້ ແລະ ຈຸລິນຊີ ຢູ່ໃນຂອບເຂດທຳມະຊາດໃດໜຶ່ງ;

8. **ຫຼັກໝາຍ** ໝາຍເຖິງ ຫຼັກເຂດທີ່ຝັງໃສ່ຈຸດແຈເຂດແດນຕອນດິນຂອງເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ ເພື່ອເປັນຫຼັກຖານຈຸດອ້າງອີງ ໃຫ້ແກ່ການສຳຫຼວດວັດແທກ ສ້າງແຜນທີ່ຕອນດິນເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ;

9. **ແມ່ນໍ້າສາຂາ** ໝາຍເຖິງ ສາຍນໍ້າສາຂາຍ່ອຍ ຂອງສາຍນໍ້າຫຼັກ ທີ່ມີເນື້ອທີ່ອ່າງຮັບນໍ້າ ແລະ ປະລິມານນໍ້ານ້ອຍ.

## ມາດຕາ 4 ນະໂຍບາຍ ຂອງອົງການປົກຄອງແຂວງ ກ່ຽວກັບ ການກຳນົດເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ

ອົງການປົກຄອງແຂວງ ຊຸກຍູ້, ສົ່ງເສີມການກຳນົດເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າຢູ່ພາຍໃນແຂວງ ເພື່ອປົກປັກຮັກສານໍ້າ ແລະ ຊັບພະຍາກອນນໍ້າ, ແຫຼ່ງຕົ້ນກຳເນີດ ແລະ ທີ່ຢູ່ອາໄສຂອງສັດນໍ້າ, ລະບົບນິເວດທາງທຳມະຊາດ ແລະ ສິ່ງແວດລ້ອມ ພ້ອມທັງຫຼຸດຜ່ອນຜົນກະທົບຈາກໄພພິບັດທາງທຳມະຊາດ, ເຮັດໃຫ້ເກີດຜົນປະໂຫຍດສູງສຸດ ຕໍ່ການພັດທະນາເສດຖະກິດ-ສັງຄົມ, ຮັບປະກັນ ໃຫ້ແກ່ການປົກປັກຮັກສາເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ ຕາມທິດສີຂຽວ ແລະ ຍືນຍົງ;

ອົງການປົກຄອງແຂວງ ຊຸກຍູ້, ສົ່ງເສີມທຸກພາກສ່ວນສັງຄົມ ມີສ່ວນຮ່ວມໃນການຄຸ້ມຄອງ, ປົກປັກຮັກສາ , ບູລະນະຟື້ນຟູເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ ຢູ່ພາຍໃນແຂວງ ໂດຍສອດຄ່ອງກັບກົດໝາຍ, ລະບຽບການຢ່າງເຂັ້ມງວດ ແລະ ລວມສູນເປັນເອກະພາບ.

## ມາດຕາ 5 ຫຼັກການ ກ່ຽວກັບການກຳນົດເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ

ການກຳນົດ ເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບກົດໝາຍ, ຍຸດທະສາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງ;

2. ຮັບປະກັນ ການຄຸ້ມຄອງເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ ໃຫ້ເປັນເອກະພາບໃນທົ່ວແຂວງ;

3. ເອົາການປົກປັກຮັກສາ, ພັດທະນາ ແລະ ຟື້ນຟູ ເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ ເປັນວຽກງານສຳຄັນ;

4. ຮັບປະກັນການປະສານສົມທົບກັບຂະແໜງການ, ອົງການປົກຄອງແຕ່ລະຂັ້ນ ແລະ ພາກສ່ວນທີ່ກ່ຽວຂ້ອງ;

5. ຮັບປະກັນ ຜົນປະໂຫຍດຂອງລັດ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີສ່ວນຮ່ວມໃນການຄຸ້ມຄອງ, ຟື້ນຟູ, ປົກປັກຮັກສາບູລະນະເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳຕາມກົດໝາຍ ແລະ ລະບຽບການ.

### ມາດຕາ 6 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳລົງຊີວິດ ແລະ ເຄື່ອນໄຫວ ຢູ່ແຂວງອຸດົມໄຊ.

## ໝວດທີ 2
## ເປົ້າໝາຍ ແລະ ການກຳນົດເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ

### ມາດຕາ 7 ເປົ້າໝາຍການກຳນົດເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ

ເປົ້າໝາຍການກຳນົດເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ແມ່ນບັນດາແມ່ນ້ຳສາຍສຳຄັນ ເປັນຕົ້ນ ນ້ຳຂອງ, ນ້ຳແບງ, ນ້ຳພາກ, ນ້ຳງາ, ນ້ຳແຊ, ນ້ຳອິນ, ນ້ຳກໍ, ນ້ຳຫີນ, ນ້ຳມາວ, ນ້ຳນອນ, ນ້ຳພ້າວ, ນ້ຳຄຳ ແລະ ນ້ຳງ້າວ. ນອກນີ້ ກໍ່ຍັງມີແມ່ນ້ຳສາຂາອື່ນໆ ລວມທັງຫ້ວຍ, ໜອງ, ຄອງ, ບຶງ;

ສຳລັບເຂດສະຫງວນ ຂອງບຸກຄົນ, ນິຕິບຸກຄົນ ແລະ ຂະແໜງການສ້າງຂຶ້ນ ເປັນຕົ້ນ ອ່າງເກັບນ້ຳ, ຄອງຊົນລະປະທານ, ເຂື່ອນໄຟຟ້າ ແມ່ນກຳນົດໄວ້ໃນລະບຽບການສະເພາະ ຂອງຂະແໜງການກ່ຽວຂ້ອງ.

### ມາດຕາ 8 ການກຳນົດເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ

ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ກຳນົດເປັນ 8 ເຂດ ດັ່ງນີ້:

1. ເຂດສະຫງວນເພື່ອບໍລິໂພກ ແລະ ອຸປະໂພກ;
2. ເຂດບໍລິເວນຍອດນ້ຳ;
3. ເຂດທີ່ມີຄວາມສ່ຽງຕໍ່ໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ;
4. ເຂດທີ່ດິນບໍລິເວນນ້ຳ;
5. ເຂດທີ່ມີຄວາມສ່ຽງຕໍ່ຄຸນນະພາບ ແລະ ປະລິມານນ້ຳໃຕ້ດິນ;
6. ເຂດທີ່ມີຄຸນຄ່າທາງດ້ານທຳມະຊາດ, ປະຫວັດສາດ, ວັດທະນະທຳ;
7. ເຂດພື້ນທີ່ອະນຸລັກຊີວະນາໆພັນທາງນ້ຳ ແລະ ວັງສະຫງວນ;
8. ເຂດພື້ນທີ່ ທີ່ມີຄວາມສ່ຽງຕໍ່ລະບົບນິເວດໃນຊຸມຊົນ ຫຼື ຕົວເມືອງ.

### ມາດຕາ 9 ເຂດສະຫງວນເພື່ອບໍລິໂພກ ແລະ ອຸປະໂພກ

ເຂດສະຫງວນ ເພື່ອບໍລິໂພກ ແມ່ນເຂດທີ່ກຳນົດ ເພື່ອນຳໃຊ້ສະເພາະການບໍລິໂພກຂອງພົນລະເມືອງເທົ່ານັ້ນ ແລະ ບໍ່ອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ນຳໃຊ້ເຂົ້າໃນເປົ້າໝາຍອື່ນຢ່າງເດັດຂາດ.

ເຂດສະຫງວນນ້ຳ ເພື່ອອຸປະໂພກ ແມ່ນການນຳໃຊ້ນ້ຳໃຫ້ເກີດຜົນປະໂຫຍດຕໍ່ການດຳລົງຊີວິດ, ທຳມາຫາກິນ, ການຄ້າ ແລະ ການບໍລິການ ໄປຄຽງຄູ່ກັບການບໍລິໂພກ ໂດຍກຳນົດຂອບເຂດສະຫງວນຢ່າງຈະແຈ້ງ;

ການກຳນົດຂອບເຂດສະຫງວນ ເພື່ອອຸປະໂພກ, ບໍລິໂພກ ແມ່ນອີງໃສ່ທີ່ຕັ້ງ, ຈຸດພິເສດ ແລະ ຄວາມເໝາະສົມຂອງແຕ່ລະພື້ນທີ່ ບົນພື້ນຖານ ການປຶກສາຫາລື ແລະ ເປັນເອກະພາບກັບບັນດາຂະແໜງການທີ່ກ່ຽວຂ້ອງແຕ່ລະຂັ້ນ.

**ມາດຕາ 10 ເຂດບໍລິເວນຍອດນ້ຳ**

ເຂດບໍລິເວນຍອດນ້ຳ ແມ່ນແຫຼ່ງໃຫ້ກຳເນີດນ້ຳ ທີ່ລົງສູ່ສາຍນ້ຳ, ຫ້ວຍ, ບຶງ, ແຫຼ່ງນ້ຳໃດໜຶ່ງ ແລະ ຖືກປົກຄຸມດ້ວຍປ່າໄມ້ທຳມະຊາດທີ່ມີຄວາມອຸດົມສົມບູນ ເຊິ່ງສ່ວນຫຼາຍແມ່ນ ຢູ່ພູ ຫຼື ພື້ນທີ່ສູງ ທີ່ມີຄວາມຄ້ອຍຊັນ. ເຂດດັ່ງກ່າວ ບໍ່ອະນຸຍາດໃຫ້ມີການນຳໃຊ້ນ້ຳ, ທຳການຜະລິດກະສິກຳ, ລ້ຽງສັດ, ຕັດຕົ້ນໄມ້, ຂຸດ, ຈົກ, ຖົມດິນ, ຖິ້ມສິ່ງເສດເຫຼືອ, ສານເຄມີ ແລະ ກໍ່ສ້າງສິ່ງປຸກສ້າງ, ເຊົ່າ ຫຼື ສຳປະທານທີ່ດິນ;

ການກຳນົດຂອບເຂດສະຫງວນບໍລິເວນຍອດນ້ຳ ແມ່ນອີງໃສ່ຂອບເຂດພື້ນທີ່ອ່າງຮັບນ້ຳ ຢູ່ເຂດບໍລິເວນຍອດນ້ຳແຕ່ລະສາຍ ບ່ອນທີ່ມີສັນປັນນ້ຳ ເວລາຝົນຕົກລົງມາໄຫຼໂຮມກັນເຂົ້າເປັນລະບົບແຫຼ່ງນ້ຳ. ນອກຈາກນີ້ອີງໃສ່ການປົກປັກຮັກສາຄວາມອຸດົມສົມບູນຂອງປ່າໄມ້, ລະບົບນິເວດ ແລະ ຊີວະນາໆພັນທາງທຳມະຊາດໃຫ້ມີຄວາມຍືນຍົງ.

**ມາດຕາ 11 ເຂດທີ່ມີຄວາມສ່ຽງຕໍ່ໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ**

ເຂດທີ່ມີຄວາມສ່ຽງຕໍ່ໄພນ້ຳຖ້ວມ ແມ່ນເຂດພື້ນທີ່ ທີ່ມີໂອກາດເກີດໄພນ້ຳຖ້ວມ ເຊັ່ນ: ຂອບເຂດພື້ນທີ່ຕ່ຳ, ເຂດແຄມແມ່ນ້ຳ, ຫ້ວຍນ້ຳ ແລະ ຂອບເຂດທີ່ມີຄວາມຄວາມຕ້ານທານຕ່ຳ ທີ່ຈະກໍ່ໃຫ້ເກີດຜົນກະທົບ ຕໍ່ຊີວິດ ແລະ ຊັບສິນ. ເຊິ່ງເປັນຂອບເຂດພື້ນທີ່ ຫ້າມບໍ່ໃຫ້ປຸກສ້າງທີ່ຢູ່ອາໄສ ແລະ ທຳການຜະລິດກະສິກຳ ຫຼື ກິດຈະກຳອື່ນທີ່ມີລັກສະນະຖາວອນ;

ເຂດທີ່ມີຄວາມສ່ຽງຕໍ່ໄພແຫ້ງແລ້ງ ແມ່ນສະພາບພື້ນທີ່ ທີ່ຂາດແຄນນ້ຳ ຈາກສາເຫດທີ່ມີຝົນໜ້ອຍ ຫຼື ຝົນບໍ່ຕົກຕາມລະດູການ, ເປັນພື້ນທີ່ຢູ່ຫ່າງໄກຈາກແຫຼ່ງນ້ຳ, ບໍ່ມີແຫຼ່ງນ້ຳໃຊ້ພຽງພໍ ກັບຄວາມຕ້ອງການ. ເຂດດັ່ງກ່າວ ແມ່ນບໍ່ອະນຸຍາດ ໃຫ້ມີການນຳໃຊ້ນ້ຳ ເຂົ້າໃນການຜະລິດອຸດສາຫະກຳ, ໂຄງການ ຫຼື ກິດຈະການບໍລິການ ເພື່ອສາມາດສະໜອງນ້ຳເຂົ້າໃນການບຳລຸງຊີວິດຢ່າງພຽງພໍ ເປັນຕົ້ນແມ່ນການບໍລິໂພກ ແລະ ການຜະລິດກະສິກຳ;

ການກຳນົດຂອບເຂດ ທີ່ມີຄວາມສ່ຽງຕໍ່ໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ ແມ່ນອີງໃສ່ສະພາບຄວາມເປັນຈິງ ແລະ ການລົງສຳຫຼວດເກັບກຳຂໍ້ມູນດ້ານວິຊາການ ຂອງບັນດາຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 12 ເຂດທີ່ດິນບໍລິເວນນ້ຳ**

ທີ່ດິນບໍລິເວນນ້ຳ ແມ່ນທີ່ດິນຢູ່ພື້ນນ້ຳ ຫຼື ຢູ່ຂອບເຂດອ້ອມແອ້ມແຫຼ່ງນ້ຳ ເຊິ່ງນອນຢູ່ໃນພື້ນທີ່ ທີ່ດິນປະເພດອື່ນ ເປັນຕົ້ນ ເຂດພື້ນທີ່ດິນທາມ, ໜອງ, ບຶງ, ທົ່ງຫຍ້ານ້ຳຖ້ວມ, ທີ່ດິນນ້ຳອອກບໍ່, ທີ່ດິນແຄມນ້ຳ, ດິນກາງນ້ຳ, ທີ່ດິນປົ່ງໃໝ່, ດິນນ້ຳບົກປະ ຫຼື ກຸດ, ດິນເກີດຈາກການດັດແປງ ຫຼື ອ່າຍແລວນ້ຳ, ນ້ຳຂັງ ຫຼື ໄຫຼຜ່ານທີ່ເກີດຂຶ້ນໂດຍທຳມະຊາດ ຫຼື ມະນຸດສ້າງຂຶ້ນ ຊຶ່ງມີລັກສະນະຖາວອນ ຫຼື ຊົ່ວຄາວ;

ການກຳນົດເຂດສະຫງວນທີ່ດິນບໍລິເວນນ້ຳ ຢູ່ໜ້າດິນ ແມ່ນນັບແຕ່ແຄມຕາຝັ່ງເຂົ້າໄປໃນເຂດພື້ນທີ່ດິນຢ່າງໜ້ອຍ ສາມສິບຫ້າແມັດ ສຳລັບແມ່ນ້ຳຂອງ ແລະ ຊາວຫ້າແມັດ ສຳລັບແມ່ນ້ຳສາຍສາຂາອື່ນ; ສິບຫ້າແມັດສຳລັບຫ້ວຍ, ໜອງ, ຄອງ, ຮ່ອງ, ບຶງ; ໃນກໍລະນີ ເຂດທີ່ມີພື້ນທີ່ຈຳກັດ ເປັນຕົ້ນເຂດຊຸມຊົນໜາແໜ້ນ, ແຫຼ່ງວັດຖຸບູຮານ, ສະຖານທີ່ສຳຄັນດ້ານປະຫວັດສາດ ແລະ ເຂດອະນຸລັກ, ພື້ນທີ່ເຂດສະຫງວນດິນບໍລິເວນນ້ຳ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 13 ເຂດທີ່ມີຄວາມສ່ຽງຕໍ່ຄຸນນະພາບ ແລະ ປະລິມານນ້ຳໃຕ້ດິນ**

ເຂດທີ່ມີຄວາມສ່ຽງຕໍ່ຄຸນນະພາບ ແລະ ປະລິມານນ້ຳໃຕ້ດິນ ແມ່ນເຂດນ້ຳໃຕ້ດິນທີ່ມີຊັ້ນນ້ຳເຄັມ ແລະ ເຂດທີ່ມີສານເຄມີອັນຕະລາຍເຈືອປົນ ຊຶ່ງເກີດຈາກທຳມະຊາດ ຫຼື ມະນຸດສ້າງຂຶ້ນ ທີ່ມີຜົນກະທົບຕໍ່ຊີວິດ, ສຸຂະພາບຂອງຄົນ, ສັດ, ພືດ. ລວມທັງ ເຂດທີ່ມີການນຳໃຊ້ນ້ຳໃຕ້ດິນໃນປະລິມານຫຼາຍ ອາດຈະເຮັດໃຫ້ເກີດການຍຸບຕົວ ຂອງຊັ້ນດິນ, ເຊິ່ງຕ້ອງມີມາດຕະການຈຳກັດການນຳໃຊ້ນ້ຳໃຕ້ດິນ ຢ່າງມີປະສິດທິພາບ;

ເຂດທີ່ມີຄວາມສ່ຽງຕໍ່ຄຸນນະພາບນ້ຳໃຕ້ດິນ ທີ່ມີຄວາມເຄັມ ແລະ ມີສານເຄມີອັນຕະລາຍ ເຈືອປົນ ແມ່ນບໍ່ອະນຸຍາດໃຫ້ນຳໃຊ້ແຫຼ່ງນ້ຳໃຕ້ດິນຢູ່ເຂດດັ່ງກ່າວ ເຂົ້າໃນການບໍລິໂພກ, ອຸປະໂພກ, ປູກຝັງ, ລ້ຽງສັດ; ສ່ວນເຂດທີ່ມີຄວາມສ່ຽງຕໍ່ປະລິມານນ້ຳໃຕ້ດິນ ແມ່ນບໍ່ອະນຸຍາດໃຫ້ນຳໃຊ້ເຂົ້າໃນເປົ້າໝາຍການຜະລິດ ເຊັ່ນ:

ການຜະລິດກະສິກຳ, ອຸດສາຫະກຳ, ທຸລະກິດ ແລະ ການບໍລິການ;

ການກຳນົດຂອບເຂດ ທີ່ມີຄວາມສ່ຽງຕໍ່ຄຸນນະພາບ ແລະ ປະລິມານນ້ຳໃຕ້ດິນ ແມ່ນອີງໃສ່ ການລິງສຳຫຼວດເກັບກຳຂໍ້ມູນທາງດ້ານວິຊາການ ຂອງບັນດາຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 14 ເຂດທີ່ມີຄຸນຄ່າທາງດ້ານທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳ**

ເຂດທີ່ມີຄຸນຄ່າທາງດ້ານທຳມະຊາດ ແມ່ນເຂດທີ່ມີທິວທັດທາງທຳມະຊາດ ທັດສະນີຍະພາບອັນສວຍສົດງົດງາມ ແລະ ໂດດເດັ່ນ ເຊັ່ນ: ພູ, ຜາ, ປ່າໄມ້, ແມ່ນ້ຳ, ລຳເຊ, ນ້ຳຕົກຕາດ, ຖ້ຳ, ນ້ຳອອກບໍ່, ບໍ່ນ້ຳອຸ່ນ ແລະ ອື່ນໆ;

ເຂດທີ່ມີຄຸນຄ່າທາງດ້ານປະຫວັດສາດ ແມ່ນເຂດທີ່ມີຄຸນຄ່າທາງດ້ານວັດຖຸ ເຊິ່ງເປັນມໍລະດົກ ທີ່ມີຕົວຕົນ ເປັນຊັບສົມບັດອັນລ້ຳຄ່າ ທາງດ້ານປະຫວັດສາດ ເຊັ່ນ: ສະຖານທີ່ປະຫວັດສາດ, ອາວຸດຍຸດໂທປະກອນ, ສະໜໍລະພູມ, ອະນຸສອນສະຖານ, ຖານທີ່ໝັ້ນຂອງຂະບວນການຕໍ່ສູ້ຂອງປະຊາຊົນ, ຜູ້ນຳການປະຕິວັດ. ນອກຈາກນັ້ນ, ຍັງມີເຂດທີ່ມີຄຸນຄ່າທາງດ້ານຈິດໃຈທີ່ບໍ່ເປັນວັດຖຸ ທີ່ຕິດພັນກັບປະຫວັດສາດມາແຕ່ລະຍຸກແຕ່ລະສະໄໝ ເປັນຕົ້ນ: ແນວຄິດ, ທິດສະດີ, ອຸດົມການ ເຊິ່ງສະແດງເຖິງມູນເຊື້ອຮັກຊາດ, ພິລະອາດຫານຕໍ່ສູ້ບໍ່ຍອມຈຳນົນ, ບົດຮຽນໃນການຕໍ່ສູ້, ການນຳພາ, ການປົກຄອງ, ການສ້າງສາພັດທະນາປະເທດຊາດ;

ເຂດທີ່ມີຄຸນຄ່າທາງດ້ານວັດທະນະທຳ ແມ່ນເຂດທີ່ມີຄຸນຄ່າທາງດ້ານວັດຖຸ ເຊິ່ງເປັນມໍລະດົກ ທີ່ມີຕົວຕົນ ເປັນຊັບສົມບັດອັນລ້ຳຄ່າທາງດ້ານວັດທະນະທຳທີ່ເປັນເອກະລັກ ເຊັ່ນ: ສີລາຈາລຶກບູຮານ, ວັດຖຸບູຮານ, ບູຮານສະຖານ, ປູຊະນີຍະສະຖານ, ຮ່ອງຮອຍພະບາດ ແລະ ວັດວາອາຮາມ. ນອກຈາກນັ້ນ, ຍັງມີເຂດທີ່ມີຄຸນຄ່າທາງດ້ານຈິດໃຈທີ່ບໍ່ເປັນວັດຖຸ ເຊິ່ງເປັນຊັບສົມບັດອັນລ້ຳຄ່າ ທາງດ້ານວັດທະນະທຳ ເປັນຕົ້ນພູມປັນຍາ, ຄວາມເຊື່ອຖື, ຮີດຄອງປະເພນີອັນດີງາມ ເຊິ່ງສະແດງອອກໃນວິຖີຊີວິດ;

ການກຳນົດບັນດາເຂດສະຫງວນດັ່ງກ່າວ ໃຫ້ປະຕິບັດການກຳນົດເຂດສະຫງວນ ຢູ່ໜ້າດິນ ຕາມທີ່ດິນບໍລິເວນໃນມາດຕາ 12. ນອກຈາກນີ້ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການຂອງຂະແໜງການກ່ຽວຂ້ອງ

**ມາດຕາ 15 ເຂດພື້ນທີ່ອະນຸລັກຊີວະນາໆພັນທາງນ້ຳ ແລະ ວັງສະຫງວນ**

ເຂດພື້ນທີ່ອະນຸລັກຊີວະນາໆພັນທາງນ້ຳ ແມ່ນເຂດທີ່ເປັນບ່ອນຢູ່ອາໄສ ຂອງສັດນ້ຳ ແລະ ພືດພັນຈຳນວນຫຼາຍຊະນິດພັນ ຢູ່ຕາມແມ່ນ້ຳ, ລຳເຊ, ບຶງ, ໜອງ, ຊຶ່ງເຂດດັ່ງກ່າວ ຫ້າມລ່າສັດນ້ຳທຸກຊະນິດຕັດຕົ້ນໄມ້, ຂຸດ, ຈົກ, ຖົມດິນ, ຖິ້ມສິ່ງເສດເຫຼືອ ແລະ ກໍ່ສ້າງສິ່ງປຸກສ້າງຕ່າງໆ;

ວັງສະຫງວນ ແມ່ນເຂດນ້ຳ ບ່ອນນ້ຳເລິກ ເປັນພື້ນທີ່ແຫຼ່ງນ້ຳ ຫຼື ຕາມລຳແມ່ນ້ຳໃດໜຶ່ງ ທີ່ໄດ້ກຳນົດໃຫ້ເປັນເຂດຫວງຫ້າມຕະຫຼອດລະດູການ ເພື່ອເປັນບ່ອນຢູ່ອາໄສ ແລະ ແຜ່ພັນຢ່າງປອດໄພ ຂອງຊັບພະຍາກອນສັດນ້ຳ. ໃນກໍລະນີ ຕ້ອງການນຳໃຊ້ນ້ຳຢູ່ເຂດດັ່ງກ່າວ ຕ້ອງໄດ້ຂໍອະນຸຍາດຈາກບັນດາຂະແໜງການ ແລະ ອົງການປົກຄອງບ້ານທີ່ກ່ຽວຂ້ອງ;

ການກຳນົດຂອບເຂດພື້ນທີ່ ອະນຸລັກຊີວະນາໆພັນທາງນ້ຳ ແມ່ນໃຫ້ປະຕິບັດການກຳນົດເຂດສະຫງວນຢູ່ໜ້າດິນ ຕາມທີ່ດິນບໍລິເວນນ້ຳ ໃນມາດຕາ 12; ສ່ວນການກຳນົດຂອບເຂດວັງສະຫງວນ ແມ່ນກຳນົດສະເພາະເຂດໜ້ານ້ຳ ອອກໄປຫາແຄມຕາຝັ່ງຂອງແຫຼ່ງນ້ຳເທົ່ານັ້ນ.

**ມາດຕາ 16 ເຂດພື້ນທີ່ ທີ່ມີຄວາມສ່ຽງຕໍ່ລະບົບນິເວດໃນຊຸມຊົນ ຫຼື ຕົວເມືອງ**

ເຂດພື້ນທີ່ ທີ່ມີຄວາມສ່ຽງຕໍ່ລະບົບນິເວດໃນຊຸມຊົນ ຫຼື ຕົວເມືອງ ແມ່ນ ພື້ນທີ່ເຂດເທດສະບານ, ຊຸມຊົນ ທີ່ກຳນົດເປັນເຂດອະນຸລັກໄວ້ ເພື່ອຮັກສາລະບົບນິເວດ ແລະ ຊີວະນາໆພັນ ເປັນຕົ້ນ ທິວທັດທຳມະຊາດສວນສາທາລະນະ, ປ່າໄມ້ທີ່ຍັງຫຼົງເຫຼືອຢູ່ ແລະ ພື້ນທີ່ຕົ້ນໄມ້, ແມ່ນ້ຳ, ຮ່ອງນ້ຳ, ໜອງ, ບຶງ, ພື້ນທີ່ກະສິກຳຊານເມືອງ, ພື້ນທີ່ນິເວດວິທະຍາທີ່ມີຫຼາຍຂະໜາດແຕກຕ່າງກັນ.

ການກຳນົດເຂດສະຫງວນ ທີ່ມີຄວາມສ່ຽງ ຕໍ່ລະບົບນິເວດໃນຊຸມຊົນ ຫຼື ຕົວເມືອງ ແມ່ນອີງໃສ່ທີ່ຕັ້ງ,

ຈຸດພິເສດ ແລະ ຄວາມເໝາະສົມຂອງແຕ່ລະພື້ນທີ່ ບົນພື້ນຖານການປຶກສາຫາລື ແລະ ເປັນເອກະພາບກັບບັນດາຂະແໜງການທີ່ກ່ຽວຂ້ອງແຕ່ລະຂັ້ນ.

## ໝວດທີ 3
## ຂັ້ນຕອນການກຳນົດ ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ

**ມາດຕາ 17 ຂັ້ນຕອນການກຳນົດເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ**

ຂັ້ນຕອນການກຳນົດເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ໃຫ້ປະຕິບັດ ດັ່ງນີ້:

1. ການສຳຫຼວດ ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ;
2. ການປັກຫຼັກໝາຍ ແລະ ສຳຫຼວດວັດແທກສ້າງແຜນທີ່ຕອນດິນ ຂອງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ;
3. ການພິຈາລະນາຮັບຮອງ ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ;
4. ການຂຶ້ນບັນຊີເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ;
5. ການປ່ຽນແປງເຂດແດນ ຂອງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ

**ມາດຕາ 18 ການສຳຫຼວດ ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ**

ການສຳຫຼວດເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ແມ່ນການລົງພື້ນທີ່ພາກສະໜາມ, ການເກັບກຳຂໍ້ມູນ, ປະເມີນເຂດພື້ນທີ່ ທີ່ມີເງື່ອນໄຂເໝາະສົມ ແລະ ມີທ່າແຮງ ເພື່ອກຳນົດຈຸດສ້າງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ພ້ອມທັງສ້າງແຜນທີ່ເຂດສະຫງວນຢ່າງລະອຽດ.

**ມາດຕາ 19 ການປັກຫຼັກໝາຍ ແລະ ສຳຫຼວດວັດແທກສ້າງແຜນທີ່ຕອນດິນ ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ**

ການປັກຫຼັກໝາຍທີ່ດິນເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ແມ່ນເຄື່ອງໝາຍທາງການ ຊຶ່ງໃຊ້ສະເພາະເປັນເຄື່ອງໝາຍຝັງໃສ່ຈຸດແຈຕອນດິນ ຂອງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ເພື່ອເປັນຫຼັກຖານຈຸດອ້າງອີງ ພ້ອມທັງຕິດຕັ້ງປ້າຍ ແລະ ລະບຸຂໍ້ມູນສຳຄັນຕ່າງໆ ຂອງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ;

ການສຳຫຼວດວັດແທກສ້າງແຜນທີ່ຕອນດິນຂອງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ແມ່ນການດຳເນີນການສຳຫຼວດວັດແທກ ສ້າງແຜນທີ່ດິນ ເຊິ່ງປະກອບມີຂໍ້ມູນຕ່າງໆເປັນຕົ້ນ ແຜນທີ່ຕອນດິນ, ເລກທີຕອນດິນ, ມາດຕາສ່ວນແຜນທີ່, ທີ່ຕັ້ງ, ໄລຍະເຂດແດນ, ລະຫັດຫຼັກເຂດ, ເລກທີຕອນດິນຂ້າງຄຽງ, ເສັ້ນທາງ ຮ່ອງນ້ຳ, ສາຍນ້ຳ.

**ມາດຕາ 20 ການພິຈາລະນາຮັບຮອງ ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ**

ພາຍຫຼັງສຳເລັດ ການສຳຫຼວດ, ວັດແທກ ສ້າງແຜນທີ່ຕອນດິນ ຂອງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ໃຫ້ນຳສະເໜີອົງການທີ່ມີສິດຄຸ້ມຄອງ ຄົ້ນຄວ້າພິຈາລະນາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 32, 33 ແລະ 34 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 21 ການຂຶ້ນບັນຊີເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ**

ການຂຶ້ນບັນຊີເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ແມ່ນການສັງລວມຈັດໝວດ ແລະ ໃສ່ລະຫັດຂໍ້ມູນເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ເຂົ້າໃນຖານຂໍ້ມູນ ຂອງຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອເປັນເຄື່ອງມືໃນການຕິດຕາມກວດກາປະເມີນ, ວິເຄາະບັນຫາ, ສະໜັບສະໜູນໃຫ້ແກ່ການວາງແຜນ, ການພັດທະນາແຫຼ່ງນ້ຳ ແລະ ຊັບພະຍາກອນນ້ຳ.

**ມາດຕາ 22 ການປ່ຽນແປງ ເຂດແດນຂອງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ**

ການປ່ຽນແປງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ແມ່ນການປ່ຽນແປງເຂດແດນ, ເພີ່ມ ຫຼື ຫຼຸດເນື້ອທີ່ດິນ, ການຫັນປ່ຽນປະເພດທີ່ດິນ ແລະ ເປົ້າໝາຍອື່ນ ເຮັດໃຫ້ມີການປ່ຽນແປງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ຕ້ອງສະເໜີຕໍ່ອົງການຄຸ້ມຄອງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 32, 33 ແລະ 34 ຂອງຂໍ້ຕົກລົງສະບັບນີ້ ເພື່ອພິຈາລະນາ. ການສະເໜີດັ່ງກ່າວ ຕ້ອງສະແດງໃຫ້ເຫັນເຫດຜົນ ແລະ ຄວາມຈຳເປັນ ໃນການປ່ຽນແປງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ໂດຍການເຫັນດີເປັນເອກະພາບກັບບັນດາຂະແໜງການ ແລະ ອົງການປົກຄອງແຕ່ລະຂັ້ນທີ່ກ່ຽວຂ້ອງ.

## ໝວດທີ 4
## ການຄຸ້ມຄອງ, ປົກປັກຮັກສາ, ກວດກາລາດຕະເວນ, ຟື້ນຟູ, ການມີສ່ວນຮ່ວມຂອງສັງຄົມ ແລະ ການປູກຈິດສຳນຶກ ຕໍ່ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ

**ມາດຕາ 23 ການຄຸ້ມຄອງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ**

ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ຄຸ້ມຄອງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ໂດຍປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງແຕ່ລະຂັ້ນທີ່ກ່ຽວຂ້ອງ ດ້ວຍການກຳນົດລະບຽບການ, ພ້ອມທັງ ດຳເນີນການສຳຫຼວດ, ປັກຫຼັກໝາຍ, ຮັບຮອງ ແລະ ຂຶ້ນບັນຊີເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ໃນຂອບເຂດທົ່ວແຂວງ.

ສຳລັບທີ່ດິນບໍລິເວນນ້ຳ ແມ່ນມອບໃຫ້ຂະແໜງການ ຄຸ້ມຄອງທີ່ດິນແຕ່ລະປະເພດ ທີ່ມີທີ່ດິນບໍລິເວນນ້ຳ ເປັນເຈົ້າການຄຸ້ມຄອງ, ພ້ອມທັງສຳຫຼວດ, ຮັບຮອງ ແລະ ຂຶ້ນບັນຊີດິນບໍລິເວນນ້ຳ ໂດຍປະສານສົມທົບກັບຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕາມທີ່ກົດໝາຍວ່າດ້ວຍທີ່ດິນ ແລະ ດຳລັດວ່າດ້ວຍທີ່ດິນບໍລິເວນນ້ຳ ກຳນົດໄວ້.

**ມາດຕາ 24 ການປົກປັກຮັກສາເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພັນທະປົກປັກຮັກສາເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ໃຫ້ມີຄວາມອຸດົມສົມບູນ, ບໍ່ໃຫ້ກໍ່ຜົນເສຍຫາຍແກ່ນ້ຳ ແລະ ຊັບພະຍາກອນນ້ຳ ພ້ອມທັງຈັດຕັ້ງປະຕິບັດຕາມແຜນຄຸ້ມຄອງອ່າງຮັບນ້ຳ ກຳນົດໄວ້.

**ມາດຕາ 25 ການກວດກາລາດຕະເວນເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ**

ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນເຈົ້າການປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງແຕ່ລະຂັ້ນທີ່ກ່ຽວຂ້ອງ ລົງຕິດຕາມກວດກາລາດຕະເວນ ຢູ່ພາຍໃນ ແລະ ອ້ອມຂ້າງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ຢ່າງເປັນປົກກະຕິຢ່າງໜ້ອຍ ສອງ ຄັ້ງຕໍ່ປີ ແລະ ແບບກະທັນຫັນ ໃນກໍລະນີ ມີເຫດການເກີດຂຶ້ນ ເພື່ອສະກັດກັ້ນການບຸກລຸກທຳລາຍ ຫຼື ສ້າງຜົນກະທົບອັນບໍ່ດີຕໍ່ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ.

**ມາດຕາ 26 ການຟື້ນຟູເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ**

ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນເຈົ້າການປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງແຕ່ລະຂັ້ນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດການຟື້ນຟູເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ທີ່ມີຄວາມເຊື່ອມໂຊມ ຕາມແຜນຄຸ້ມຄອງອ່າງຮັບນ້ຳ ໂດຍການນຳໃຊ້ມາດຕະຖານເຕັກນິກທີ່ເໝາະສົມ ເພື່ອປັບປຸງຄຸນນະພາບນ້ຳ, ຊັບພະຍາກອນນ້ຳ, ສິ່ງແວດລ້ອມ, ຊີວະນາໆພັນ ໃຫ້ມີຄວາມອຸດົມສົມບູນ

ແລະ ຍືນຍົງ.

**ມາດຕາ 27 ການມີສ່ວນຮ່ວມຂອງສັງຄົມ**

ການມີສ່ວນຮ່ວມຂອງສັງຄົມ ແມ່ນຂະບວນການປຶກສາຫາລື, ການສະໜອງຂໍ້ມູນຂ່າວສານ ແລະ ການຮັບຄຳຄິດຄຳເຫັນ ຂອງທຸກພາກສ່ວນສັງຄົມ ໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ ພ້ອມທັງ ຕິດຕາມກວດກາ ການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ ເປັນແຕ່ລະໄລຍະ ເພື່ອຮັບປະກັນຄວາມຍືນຍົງ ຂອງລະບົບນິເວດ ໃຫ້ມີຄວາມອຸດົມສົມບູນ.

**ມາດຕາ 28 ການປູກຈິດສຳນຶກ**

ການປູກຈິດສຳນຶກ ແມ່ນໂຄສະນາເຜີຍແຜ່, ສຶກສາອົບຮົມຄວາມໝາຍ ແລະ ຄວາມສຳຄັນ ຂອງວຽກງານຄຸ້ມຄອງເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າໃຫ້ສັງຄົມຮັບຮູ້ຢ່າງທົ່ວເຖິງ ໂດຍຜ່ານສື່ມວນຊົນ, ຊຸກຍູ້ ແລະ ສົ່ງເສີມສ້າງກິດຈະກຳຕ່າງໆເພື່ອປຸກລະດົມທົ່ວສັງຄົມເຂົ້າຮ່ວມ, ໃຫ້ການຮ່ວມມືໃນການຄຸ້ມຄອງປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ ໃຫ້ມີຄວາມຍືນຍົງ;

ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນເຈົ້າການປະສານສົມທົບກັບບັນດາຂະແໜງການ ແລະ ອົງການປົກຄອງແຕ່ລະຂັ້ນ ຈັດຕັ້ງການໂຄສະນາເຜີຍແຜ່ດ້ວຍຮູບການຕ່າງໆ ເພື່ອປູກຈິດສຳນຶກ ວຽກງານຄຸ້ມຄອງເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າໃຫ້ແກ່ປະຊາຊົນ, ກຸ່ມຄົນ ແລະ ການຈັດຕັ້ງ ຢ່າງທົ່ວເຖິງ. .

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 29 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ບຸກລຸກ, ຈັບຈອງ, ຊື້-ຂາຍ ແລະ ທຳລາຍ ເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ;
2. ຂຸດຄົ້ນຫີນແຮ່, ຊາຍ, ແຮ່ທາດ, ດິນ, ຕັດຕົ້ນໄມ້, ປຸກສ້າງ, ໃຫ້ເຊົ່າ-ສຳປະທານ ເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ ໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ;
3. ຂຸດ, ເຈາະ, ຖົມ, ກົ່ນ ແລະ ປັບແປງໜ້າດິນ ທີ່ກໍ່ໃຫ້ເກີດຄວາມເສຍຫາຍ ຕໍ່ເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ;
4. ປ່ອຍນໍ້າເປື້ອນ, ສານເຄມີທີ່ເປັນພິດ, ຖິ້ມລະເບີດ, ຈູດ ຫຼື ຊັອດສັດນໍ້າ, ຖິ້ມສິ່ງເສດເຫຼືອ ແລະ ຂີ້ເຫຍື້ອ ຢູ່ເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 30 ຂໍ້ຫ້າມສຳລັບພະນັກງານ ຫຼື ເຈົ້າໜ້າທີ່**

ຫ້າມພະນັກງານ ຫຼື ເຈົ້າໜ້າທີ່ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ສິດອຳນາດ, ໜ້າທີ່ຕຳແໜ່ງ ໃນການຄຸ້ມຄອງ ແລະ ນຳໃຊ້ເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ ເພື່ອຫາຜົນປະໂຫຍດສ່ວນຕົວ;
2. ປະຕິບັດໜ້າທີ່ໂດຍບໍ່ມີຄວາມຍຸຕິທຳ ແລະ ບໍ່ຖືກຕ້ອງ ຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການ ຈັດຕັ້ງທີ່ເຄື່ອນໄຫວ ກ່ຽວກັບເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ;
3. ເມີນເສີຍ ຫຼື ປະລະໜ້າທີ່, ກົດໜ່ວງ, ຖ່ວງດຶງການພິຈາລະນາເອກະສານຕ່າງໆ ກ່ຽວກັບເຂດສະ

ຫງອນນ້ຳ ແລະ ຊັບພະຍາກອນນ້ຳ;

4. ປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມ, ເປີດເຜີຍຄວາມລັບຂອງລັດ ແລະ ທຳລາຍເອກະສານ, ຫຼັກໝາຍ ກ່ຽວກັບ ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ;

5. ອອກໜັງສືອະນຸຍາດ ສິດນຳໃຊ້, ໃຫ້ເຊົ່າ-ສຳປະທານ ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ອົງການຄຸ້ມຄອງ ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ

### ມາດຕາ 31 ອົງການຄຸ້ມຄອງ ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ

ອົງການຄຸ້ມຄອງ ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ປະກອບມີ ດັ່ງນີ້:

1. ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ;
2. ຫ້ອງການ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ;
3. ບັນດາຂະແໜງການ, ອົງການ ທີ່ກ່ຽວຂ້ອງ;
4. ອົງການປົກຄອງບ້ານ.

### ມາດຕາ 32 ສິດ ແລະ ໜ້າທີ່ ຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ

ສິດ ແລະ ໜ້າທີ່ ຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ມີດັ່ງນີ້:

1. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ຍຸດທະສາດ, ກົດໝາຍ, ມະຕິ, ຄຳສັ່ງ, ລະບຽບການ ແລະ ແຜນການ ໃນວຽກງານຄຸ້ມຄອງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ;

2. ໂຄສະນາ, ເຜີຍແຜ່ກົດໝາຍ, ຂໍ້ຕົກລົງ ແລະ ລະບຽບການຕ່າງໆ ພ້ອມທັງປຸກຈິດສຳນຶກ ໃຫ້ແກ່ປະຊາຊົນ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນ ຮັບຮູ້ເຂົ້າໃຈ ແລະ ເປັນເຈົ້າການເຂົ້າຮ່ວມຈັດຕັ້ງປະຕິບັດວຽກງານຄຸ້ມຄອງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ;

3. ປະສານສົມທົບກັບບັນດາພະແນກ ແລະ ອົງການປົກຄອງຂັ້ນເມືອງ ໃນການລົງສຳຫຼວດ, ເກັບກຳຂໍ້ມູນ ແລະ ກຳນົດເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳລະດັບແຂວງ ເພື່ອສະເໜີເຈົ້າແຂວງ ພິຈາລະນາຮັບຮອງ ບົນພື້ນຖານການເຫັນດີ ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

4. ຂຶ້ນບັນຊີເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ທີ່ເຈົ້າແຂວງຮັບຮອງ ແລ້ວມອບໃຫ້ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນເມືອງທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງ ແລະ ຕິດຕາມ, ກວດກາເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ;

5. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ຕາມຄວາມຮັບຜິດຊອບ ຢ່າງເປັນປົກກະຕິ;

6. ເກັບກຳ, ສັງລວມຂໍ້ມູນ, ສຶກສາ, ຄົ້ນຄວ້າ ແລະ ວິໄຈ ເພື່ອກຳນົດວິທີການ, ມາດຕະການປ້ອງກັນ, ແກ້ໄຂ, ຟື້ນຟູບູລະນະເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ເພື່ອປະກອບສ່ວນໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມຂອງແຂວງ;

7. ຄົ້ນຄວ້າຄຳຮ້ອງ, ຄຳສະເໜີ ແລະ ແກ້ໄຂບັນຫາການບຸກລຸກ, ຈັບຈອງ ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳຈາກບຸກຄົນ, ນິຕິບຸກຄົນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕາມຂອບເຂດຄວາມຮັບຜິດຊອບ;

8. ສະຫຼຸບ-ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ ໃຫ້ແກ່ອົງການປົກຄອງແຂວງ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຢ່າງເປັນປົກກະຕິ;

9. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 33 ສິດ ແລະ ໜ້າທີ່ ຂອງຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ**

ສິດ ແລະ ໜ້າທີ່ ຂອງຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ມີດັ່ງນີ້:

1. ຈັດຕັ້ງປະຕິບັດແຜນຍຸດທະສາດ, ກົດໝາຍ, ມະຕິ, ຄຳສັ່ງ, ຄຳແນະນຳ, ລະບຽບການຕ່າງໆ ກ່ຽວກັບ ວຽກງານຄຸ້ມຄອງເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ ທີ່ຂັ້ນເທິງວາງອອກ;

2. ໂຄສະນາ, ເຜີຍແຜ່ກົດໝາຍ, ຂໍ້ຕົກລົງ ແລະ ລະບຽບການຕ່າງໆ ພ້ອມທັງປຸກຈິດສຳນຶກ ໃຫ້ແກ່ປະຊາຊົນ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນ ຮັບຮູ້ເຂົ້າໃຈ ແລະ ເປັນເຈົ້າການເຂົ້າຮ່ວມ ຈັດຕັ້ງປະຕິບັດວຽກງານຄຸ້ມຄອງເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ ຢູ່ພາຍໃນເມືອງ;

3. ປະສານສົມທົບກັບບັນດາຫ້ອງການ ແລະ ອົງການປົກຄອງບ້ານທີ່ກ່ຽວຂ້ອງ ລົງສຳຫຼວດ, ເກັບກຳຂໍ້ມູນ ແລະ ກຳນົດເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ ລະດັບເມືອງ ເພື່ອສະເໜີເຈົ້າເມືອງ ພິຈາລະນາຮັບຮອງ ບົນພື້ນຖານການເຫັນດີຂອງເຈົ້າແຂວງ;

4. ຂຶ້ນບັນຊີເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ ທີ່ເຈົ້າເມືອງຮັບຮອງ ແລ້ວສົ່ງໃຫ້ອົງການປົກຄອງບ້ານທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງ ແລະ ຕິດຕາມກວດກາ;

5. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ ທີ່ມີຢູ່ພາຍໃນເມືອງ ຢ່າງເປັນປົກກະຕິ;

6. ຄົ້ນຄວ້າຄຳຮ້ອງ, ຄຳສະເໜີ ແລະ ແກ້ໄຂບັນຫາການບຸກລຸກ, ຈັບຈອງ ເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າຈາກບຸກຄົນ, ນິຕິບຸກຄົນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕາມຂອບເຂດຄວາມຮັບຜິດ ຊອບ;

7. ສະຫຼຸບ-ລາຍງານຜົນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າໃຫ້ອົງການປົກຄອງເມືອງ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ເປັນປົກກະຕິ;

8. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 34 ສິດ ແລະ ໜ້າທີ່ຂອງບັນດາຂະແໜງການ, ອົງການທີ່ກ່ຽວຂ້ອງ**

ສິດ ແລະ ໜ້າທີ່ ຂອງຂະແໜງການ, ອົງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ມີດັ່ງນີ້:

1. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ຍຸດທະສາດ, ກົດໝາຍ, ມະຕິ, ຄຳສັ່ງ, ລະບຽບການ ແລະ ທິດທາງແຜນການ ໃນວຽກງານຄຸ້ມຄອງເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າຢູ່ພາຍໃນແຂວງ;

2. ເປັນເຈົ້າການປະສານສົມທົບ ກັບຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ລົງສຳຫຼວດ, ເກັບກຳຂໍ້ມູນ ແລະ ກຳນົດເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ ຕາມຂອບເຂດຄວາມຮັບຜິດຊອບ;

3. ຈັດຕັ້ງປະຕິບັດວຽກງານຄຸ້ມຄອງເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ;

4. ປະສານສົມທົບກັບຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສ້າງແຜນຄຸ້ມຄອງເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ; ເຂົ້າຮ່ວມຕິດຕາມ, ກວດກາ ແລະ ປະເມີນຜົນ ການຄຸ້ມຄອງເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າ ເປັນປະຈຳ; ເຂົ້າຮ່ວມຄົ້ນຄ້ວາຄຳຮ້ອງ, ຄຳສະເໜີ ແລະ ແກ້ໄຂຂໍ້ຂັດແຍ່ງ

ກ່ຽວກັບເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ຕາມພາລະບົດບາດ;

5. ສະຫຼຸບ-ລາຍງານ ຜົນການຈັດຕັ້ງປະຕິບັດ ວຽກງານການຄຸ້ມຄອງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ຕາມພາລະບົດບາດ ໃຫ້ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນປະຈຳ;

6. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 35 ສິດ ແລະ ໜ້າທີ່ ຂອງອົງການປົກຄອງບ້ານ**

ສິດ ແລະ ໜ້າທີ່ ຂອງອົງການປົກຄອງບ້ານ ມີດັ່ງນີ້:

1. ຈັດຕັ້ງປະຕິບັດແຜນຍຸດທະສາດ, ກົດໝາຍ, ມະຕິ, ຄຳສັ່ງ, ຄຳແນະນຳ, ລະບຽບການຕ່າງໆ ກ່ຽວກັບວຽກງານຄຸ້ມຄອງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ທີ່ຂັ້ນເທິງວາງອອກ;

2. ເຜີຍແຜ່, ສຶກສາອົບຮົມ, ປຸກຈິດສຳນຶກ, ປຸກລະດົມຂົນຂວາຍ, ຊຸກຍູ້ໃຫ້ປະຊາຊົນ ເປັນເຈົ້າການເຂົ້າຮ່ວມໃນການຄຸ້ມຄອງ, ປົກປັກຮັກສາ, ບູລະນະຟື້ນຟູ ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ຢູ່ພາຍໃນບ້ານ;

3. ຄົ້ນຄວ້າ ແລະ ກຳນົດວັງສະຫງວນ ໂດຍການຕົກລົງເຫັນດີເປັນເອກະພາບ ຂອງກອງປະຊຸມອົງການປົກຄອງບ້ານ ແລະ ປະຊາຊົນພາຍໃນບ້ານ ແລ້ວສະເໜີເຈົ້າເມືອງພິຈາລະນາຮັບຮອງ ໂດຍຜ່ານຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ;

4. ສ້າງແຜນການ ແລະ ລະບຽບການຄຸ້ມຄອງວັງສະຫງວນຂອງບ້ານ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ;

5. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ທີ່ມີຢູ່ພາຍໃນບ້ານ ເປັນປົກກະຕິ;

6. ຄົ້ນຄ້ວາຄຳຮ້ອງ, ຄຳສະເໜີ ແລະ ແກ້ໄຂບັນຫາການບຸກລຸກ, ຈັບຈອງ ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ຈາກບຸກຄົນ, ນິຕິບຸກຄົນ ແລະ ພາກສ່ວນທີ່ກ່ຽວຂ້ອງ;

7. ສະຫຼຸບ-ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານ ການຄຸ້ມຄອງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ທີ່ມີຢູ່ພາຍໃນບ້ານ ໃຫ້ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ, ອົງການປົກຄອງເມືອງ ເປັນປົກກະຕິ;

8. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 7
## ອົງການກວດກາ ການກຳນົດເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ

**ມາດຕາ 36 ອົງການກວດກາ ການກຳນົດເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ**

ອົງການກວດກາການກຳນົດເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ປະກອບມີ 2 ພາກສ່ວນ ຄື:

1) ອົງການກວດກາພາຍໃນ ປະກອບມີ:

- ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ;
- ຫ້ອງການ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ;
- ບັນດາຂະແໜງການ, ອົງການ ທີ່ກ່ຽວຂ້ອງ;
- ອົງການປົກຄອງບ້ານ.

2) ອົງການກວດກາພາຍນອກ ປະກອບມີ:

- ສະພາປະຊາຊົນແຂວງ;
- ອົງການກວດສອບພາກເໜືອ 2;
- ອົງການກວດກາລັດຂັ້ນແຂວງ ແລະ ຂັ້ນເມືອງ;
- ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນຂັ້ນແຂວງ ແລະ ຂັ້ນເມືອງ.

**ມາດຕາ 37 ເນື້ອໃນການກວດກາ**

ເນື້ອໃນການກວດກາ ການກຳນົດເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ມີດັ່ງນີ້:

1. ກວດກາການປະຕິບັດນະໂຍບາຍ, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກັບການຄຸ້ມຄອງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ;

2. ກວດກາການເຄື່ອນໄຫວຈັດຕັ້ງປະຕິບັດ ຂອງອົງການຄຸ້ມຄອງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ;

3. ກວດກາຄວາມຮັບຜິດຊອບ ແລະ ແບບແຜນວິທີເຮັດວຽກຂອງພະນັກງານ ໃນການຄຸ້ມຄອງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ;

4. ກວດກາດ້ານວິຊາການ ກ່ຽວກັບໂຄງການລົງທຶນ ແລະ ກິດຈະການຕ່າງໆ ທີ່ມີແຜນພັດທະນາໃນເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 38 ຮູບການກວດກາ**

ການກວດກາ ການກຳນົດເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ດຳເນີນດ້ວຍສາມຮູບການ ດັ່ງນີ້:

1. ກວດກາປົກກະຕິ ແມ່ນການກວດກາຕາມແຜນການເປັນປະຈຳ ແລະ ມີກຳນົດເວລາແນ່ນອນ;

2. ກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍມີການແຈ້ງໃຫ້ຜູ້ຖືກກວດກາ ຮູ້ກ່ອນ ຢ່າງໜ້ອຍຊາວສີ່ຊົ່ວໂມງ;

3. ກວດກາແບບກະທັນຫັນ ແມ່ນການກວດກາ ເມື່ອເຫັນວ່າມີຄວາມຈຳເປັນ, ຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາ ຮັບຊາບລ່ວງໜ້າ.

## ໝວດທີ 8
## ນະໂຍບາຍ ຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 39 ນະໂຍບາຍ ຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ປະກອບສ່ວນເຂົ້າໃນວຽກງານຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ບູລະນະຟື້ນຟູເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ຈະໄດ້ຮັບການຍ້ອງຍໍ ແລະ ໄດ້ຮັບນະໂຍບາຍອື່ນໆ ຕາມລະບຽບການ.

**ມາດຕາ 40 ມາດຕະການ ຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍ ທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມແຕ່ກໍລະນີເບົາ ຫຼື ໜັກ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 41 ການຈັດຕັ້ງປະຕິບັດ**

ມອບໃຫ້ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຫ້ອງການ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ມີປະສິດທິຜົນສູງ;

ບັນດາພະແນກການ, ອົງການລັດທຽບເທົ່າ, ອົງການປົກຄອງເມືອງ, ອົງການປົກຄອງບ້ານ, ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 42 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການເປັນຕົ້ນໄປ.

ເຈົ້າແຂວງ

ບຸນຄົງ ຫຼ້າຈຽມພອນ